*Souphanouvong University Journal of Multidisciplinary Research and Development*
2024,Vol. 10, No. 4, 201-209
https://doi.org/10.69692/SUJMRD1004201

# Learning in the World of Information and Communication Technology through Online Videos: Developing the Ability to Edit Videos for Teaching of Lecturers at Souphanouvong University

**Sithonh Sisombath*, Kinnaly Phiphaphone[2], Kongkeo Xaychalern[3], Sipasuet Panfongphet[4], Sengdala Bualakham[5]**

*Office of Research and Academic Service Souphanouvong University Lao PDR*

**Correspondence**: Sithonh Sisombath Office of Research and Acadimic Service Souphanouvong University Lao PDR,

Tel: +856-20-22957893,

E-Mail: sithonh999@su.edu.la

***Submitted:September 19, 2024***
***Revised: October 10, 2024***
***Accepted: October 22, 2024***

**Abstract**

The purpose of this research study is to improve the basic skills of teaching video media production of teachers, to find problems in the production of teaching video media of Lecturers and to find factors that can motivate Lecturers to produce more of their own teaching video media.

Findings revealed that lecturers significantly improved their basic skills in recording, editing, and website creation, achieving nearly 100% proficiency post-training.

The Problems found that inadequate computer specifications (66.66%), slow internet connections (38.88%), and a lack of foundational computer knowledge (55.55%). These issues hindered effective practice, highlighting the need for better resources.

The research also identified key motivational factors for lecturers, including access to fast, high-quality internet, the requirement for subject-specific teaching videos, and financial support for video production. These factors demonstrated a statistically significant correlation with lecturers' motivation to create and share educational content. Overall, the study underscores the importance of training and resource availability in fostering digital education and identifies specific barriers and motivators that can enhance lecturers' engagement with technology in teaching.

**Keyword:** video recording, video editing, website

## 1. ພາກສະເໜີ

ປັດຈຸບັນນີ້ ສະພາບການຂອງໂລກໄດ້ມີການຜັນປ່ຽນ, ພັດທະນາ ແລະ ປ່ຽນແປງຢ່າງໄວວາ ເນື່ອງຈາກການແຂ່ງຂັນພັດທະນາທາງດ້ານເທັກໂນໂລຢີທີ່ທັນສະໄໝ (Modern Technology) ແລະ ການແຂ່ງຂັ້ນໃນການຜະລິດນະວັດຕະກຳໃໝ່ (New Innovation) ຂຶ້ນມາເລື້ອຍໆ ເພື່ອມາຮັບໃຊ້ ແລະ ແກ້ໄຂບັນຫາຕ່າງໆຕາມສະພາບຕົວຈິງທີ່ເກີດຂຶ້ນໃນແຕ່ລະໄລຍະ ແລະໃນຄະນະທີ່ພວກເຮົາທຸກຄົນກຳລັງຢູ່ກັບໂລກທີ່ທັນສະໄໝ ໂລກແຫ່ງດິຈິຕອນເທັກໂນໂລຢີ (Digital Technology) ເຊັ່ນ: ການພັດທະນາເທັກໂນໂລຢີຄອມພິວເຕີ, ເທັກໂນໂລຢີດ້ານເຄືອຂ່າຍ ແລະ ເທັກໂນໂລຢີດ້ານການສື່ສານ ຊຶ່ງມັນໄດ້ມີອິດທິພົນອັນໃຫຍ່ຫຼວງຕໍ່ທຸກໆຂົງເຂດວຽກງານ ໂດຍສະເພາະລະບົບການສຶກສາໃນຍຸກໃໝ່ແຫ່ງສັດຕະວັດທີ 21 ໄດ້ເນັ້ນໃສ່ການຈັດການຮຽນ - ການສອນໂດຍການນຳໃຊ້ເຄື່ອງມືໄອຊີທີ ( ICT ) ໃຫ້ຫຼາຍຂຶ້ນ (Vathanavong et al., 2023). ເພາະວ່າໂລກປັດຈຸບັນເປັນໂລກທີ່ທັນສະໄໝແຫ່ງລະບົບເຄືອຂ່າຍ ແລະ ຂໍ້ມູນຂ່າວສານ ຊຶ່ງທຸກຄົນສາມາດຕິດຕໍ່ສື່ສານ ໃຫ້ການຮ່ວມມືຊຶ່ງກັນ ແລະ ກັນໄດ້ຢ່າງສະດວກສະບາຍ ແລະ ງ່າຍດາຍ ພ້ອມກັນນັ້ນທຸກຄົນຍັງສາມາດເຂົ້າເຖິງແຫຼ່ງຂໍ້ມູນຕ່າງໆໃນທົ່ວໂລກໄດ້ (Shah et al., 2021).

ອີງຕາມສະພາບຄວາມເປັນຈິງໃນປັດຈຸບັນ ເຫັນວ່າການສຶກສາຄົ້ນຄວ້າແມ່ນໄດ້ຫັນມາເພິ່ງພາເທັກໂນໂລຢີ ລະບົບໄອຊີທີ ນັບມື້ນັບຫຼາຍຂຶ້ນເລື້ອຍໆ ໂດຍສະເພາະແມ່ນການຄົ້ນຫາຂໍ້ມູນຂ່າວສານຕ່າງໆ ສ່ວນຫຼາຍແລ້ວ ແມ່ນໃຊ້ນເທັກໂນລີຢີ ສະມາດໂຟນ (Smart Phone), ຄອມພິວເຕີ, ແມັກບຸກ, ແທັບເລັດ ແລະ ອື່ນໆ ຄົ້ນຫາຂໍ້ມູນຜ່ານທາງເວບໄຊ (website), ເຟດບຸກ (Face book), ຢູທູບ (YouTube), ຕິກຕ໋ອກ (TikTok), ກູໂກ (Google) ແລະ ອື່ນໆ ຊຶ່ງການກະຈາຍຂໍ້ມູນຜ່ານລະບົບອອນລາຍແມ່ນເຫັນວ່າມີຄວາມວ່ອງໄວ ແລະ ກ້ວາງຂວາງ. ດັ່ງນັ້ນການຜະລິດສື່ວິດີໂອ ຈຶ່ງເປັນສິ່ງຈຳເປັນສຳລັບຄູ-ອາຈານໃນຍຸກໃໝ່ ເພື່ອຖ່າຍທອດການສຶກສາ ໂດຍສະເພາະແມ່ນການສິດສອນ, ການກະຈາຍຄວາມຮູ້ໃຫ້ແກ່ນັກຮຽນ ແລະ ສັງຄົມ.

ໃນຊຸມປີທີ່ຜ່ານມານີ້ ກໍ່ໄດ້ມີການແຜ່ລະບາດຂອງພະຍາດໂຄວິດ-19 (COVID-19) ແຜ່ລາມໄປທົ່ວທຸກປະເທດໃນໂລກ ຊຶ່ງມັນໄດ້ກະທົບໃນທຸກໆຂະແໜງການຂອງສັງຄົມ ແລະ ຊີວິດ

ການເປັນຢູ່ຂອງມວນມະນຸດ ອັນເປັນສາເຫດເຮັດໃຫ້ຫຼາຍປະເທດຕ້ອງໄດ້ປິດການເຂົ້າອອກປະເທດ ບັນດາຜູ້ຄົນຕ່າງກໍຕ້ອງໄດ້ຈຳກັດການເຄື່ອນໄຫວໃນການໄປມາຫາສູ່ ຕ່າງກໍ່ໄດ້ພັກຢູ່ເຮືອນໃຜລາວເພື່ອຢຸດການແຜ່ລະບາດຂອງພະຍາດໂຄວິດ-19 ພ້ອມກັນນັ້ນບັນດາກິດຈະການຕ່າງໆຢູ່ໃນສັງຄົມກໍໄດ້ຖືກປິດເປັນໄລຍະເວລາອັນຍາວນານ ດັ່ງນັ້ນຈຶ່ງເຮັດໃຫ້ລະບົບການສຶກສາໃນຫຼາຍປະເທດຕ້ອງໄດ້ມີການປ່ຽນແປງຈາກຮູບແບບການຮຽນແບບດັ້ງເດີມເຊິ່ງໜ້າ ມາເປັນຮູບແບບການຮຽນທາງໄກ ຫຼື ຮຽນທາງອອນລາຍໂດຍການນຳໃຊ້ເຄື່ອງມືໄອຊີທີ (ICT applications). ເພາະສະນັ້ນການສົ່ງເສີມໃຫ້ຄູມີຄວາມສາມາດໃນການຜະລິດສື່ການຖ່າຍທອດຄວາມຮູ້ຂອງຕົນໄປຫານັກຮຽນດ້ວຍຄຼິບວິດີໂອ (Video Clips) ແລະ ບັນທຶກສຽງ (Sound Record) ຈຶ່ງເປັນຊ່ອງທາງທີ່ເໝາະສົມ ສຳລັບການຈັດການຮຽນ-ການສອນໃນຍຸກໃໝ່ ຍຸກແຫ່ງຂໍ້ມູນຂ່າວສານໄຮ້ພົມແດນ ຫຼື ຍຸກໂລກາພິວັດ (Globalization) ຊຶ່ງຜູ້ຮຽນສາມາດສຶກສາຄົ້ນຄວ້າດວຍຕົນເອງໄດ້ທຸກທີ່ທຸກເວລາ ຕາມຄວາມສະດວກຂອງຕົນເອງ (Kaware & Sain, 2015).

ການຈັດການຮຽນ-ການສອນທາງໄກຜ່ານເຄື່ອງອີເລກໂຕຼນິກ (Online Electronic) ຊຶ່ງສາມາດປະຕິບັດໄດ້ໃນຫຼາກຫຼາຍຮູບແບບ ໃນນັ້ນການຜະລິດອັດຄຼິບວິດີໂອການສິດສອນກໍ່ເປັນພາກສ່ວນໜຶ່ງທີ່ສຳຄັນໃນຂະບວນການຈັດການຮຽນການສອນໃນຍຸກປັດຈຸບັນໂດຍເນັ້ນນັກຮຽນເປັນໃຈກາງ ເພາະສະນັ້ນ, ມັນຈຶ່ງຈຳເປັນສຳລັບຄູ-ອາຈານ ຕ້ອງມີຄວາມຮູ້ພື້ນຖານການນຳໃຊ້ເຄື່ອງມືແອັບພຼິເຄເຊິນ ໄອຊີທີ (ICT Applications) ເພື່ອສະໜອງຂໍ້ມູນ ແລະ ຈັດການການສິດສອນຜ່ານວິດີໂອລິ້ງ (Video Link) ຫຼື ອັດຄຼິບວິດີໂອການສິນສອນຂອງຕົນເອງ ເພື່ອສົ່ງໃຫ້ນັກຮຽນໄດ້ເບິ່ງ ແລະ ສຶກສາຄົ້ນຄວ້າດ້ວຍຕົນເອງຫຼາຍຂຶ້ນ (UGWU et al, 2019). ດັ່ງນັ້ນ, ການຈັດການຮຽນ-ການສອນໃນຍຸກປັດຈຸບັນ ທີ່ເນັ້ນການນຳໃຊ້ໄອຊີທີໃຫ້ຫຼາຍຂຶ້ນນັ້ນຄູກໍ່ຕ້ອງໄດ້ມີເຕັກນິກທັກສະດ້ານການນຳໃຊ້ເຄື່ງມືໄອຊີທີໃຫ້ພຽງພໍ ເພື່ອຈະໄດ້ຮູ້ຈັດສັນແຫຼ່ງຂໍ້ມູນຕ່າງໆ ແລະ ສະໜອງຂໍ້ມູນດັ່ງກ່າວໃຫ້ນັກຮຽນໂດຍຜ່ານຄຼິບວິດີໂອການສິດສອນຂອງຕົນເອງ (Bouasangthong et al., 2021).

ຄວາມຈິງແລ້ວ ການຜະລິດສື່ວິດີໂອເພື່ອການຖ່າຍທອດຄວາມຮູ້ ໃຫ້ນັກຮຽນໄດ້ສຶກສາຮຽນຮູ້ດ້ວຍຕົນເອງນັ້ນ ຢູ່ບັນດາປະເທດທີ່ພັດທະນາແລ້ວ ແມ່ນໄດ້ນຳໃຊ້ ແລະ ປະສົບຜົນສຳເລັດໃນທຸກໆລະດັບຊັ້ນຮຽນ. ຄູຜູ້ສອນກໍມີຄວາມຊຳນານ ແລະ ຊິນເຄີຍໃນການສ້າງແຫຼ່ງຂໍ້ມູນຊອບແວ່ຕ່າງໆ (software resources) ເພື່ອຈັດຫາອຸປະກອນການຮຽນໃຫ້ແກ່ນັກຮຽນເຊັ່ນ: ບັນທຶກສຽງ, ຄຼິບວິດີໂອ ແລະ ອຸປະກອນກັນຮຽນອື່ນໃນການສອນອອນລາຍ (König et al., 2020).

ແຕ່ເຖິງຢ່າງໃດກໍ່ຕາມ ການນຳໃຊ້ເຄື່ອງມືເທັກໂນໂລຢີລະບົບໄອຊີທີ ເຂົ້າໃນການຜະລິດວິດີໂອເພື່ອການສຶກສາທີ່ມີຄຸນນະພາບນັ້ນ ແມ່ນຍັງມີຄວາມຫຍຸ້ງຍາກຫຼາຍສຳລັບປະເທດທີ່ມີລາຍຮັບຕ່ຳຫາປານກາງ ເຊິ່ງບັນດາປະເທດເຫຼົ່ານີ້ທີ່ຍັງບໍ່ມີຄວາມພ້ອມ ແລະ ຂາດແຄນສິ່ງອຳນວຍຄວາມສະດວກທາງດ້ານພື້ນຖານໂຄງລ່າງ ເທັກໂນໂລຢີ ແລະ ຍັງຂາດແຄນຊັບພະຍາກອນມະນຸດທີ່ມີຄວາມຮູ້ຄວາມສາມາດ ປະສົບການໃນການນຳໃຊ້ເຄື່ອງມືໄອຊີທີທີ່ທັນສະໄໝອີກດ້ວຍ (Zarei & Mohammadi, 2021; Banday, Ahmed, & Jan , 2013).

ປະເທດລາວເປັນປະເທດທີ່ກຳລັງພັດທະນາ ສະນັ້ນ, ຍັງຂາດແຄນບັນດາເທັກໂນໂລຢີທີ່ທັນສະໄໝ ດັ່ງນັ້ນ, ປະເທດລາວຈຶ່ງໄດ້ມີນະໂຍບາຍສົ່ງເສີມການພັດທະນາ ພື້ນຖານເທັກໂນໂລຢີຂໍ້ມູນຂ່າວສານ ພ້ອມທັງຈັດສັນງົບປະມານເພື່ອພັດທະນາການນຳໃຊ້ເຄື່ອງມືໄອຊີທີ ເຂົ້າໃນການພັດທະນາເສດຖະກິດສັງຄົມໃຫ້ທົ່ວເຖິງ ແລະ ມີຄວາມສະດວກສະບາຍຫຼາຍຂຶ້ນ (Lao National Assembly, 2016). ຊຶ່ງນັບຕັ້ງແຕ່ການສຶກຂອງສາລາວໄດ້ທົດລອງພັດທະນາຮູບແບບການຈັດການຮຽນ-ການສອນອອນລາຍໃນທຸກລະດັບຊັ້ນຮຽນ ໂດຍການນຳໃຊ້ເຄື່ອງມືໄອຊີທີ ຊຶ່ງມັນໄດ້ເຮັດໃຫ້ຄູ-ອາຈານ ແລະ ນັກຮຽນປະເຊີນກັບບັນຫາ ສິ່ງທ້າທາຍອັນໃໝ່ (UNESCO, 2021).

ໃນໄລຍະທີ່ຜ່ານມາໂດຍສະເພາະແມ່ນຊ່ວງຂອງການແຜ່ລະບາດຂອງພະຍາດ COVID-19 ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ກໍ່ໄດ້ມີການຈັດການຮຽນ-ການສອນໂດຍຜ່ານຊ່ອງທາງອອນລາຍດ້ວຍຫຼາກຫຼາຍຮູບແບບຕາມຄວາມສະດວກຂອງຄູສອນ ແລະ ນັກຮຽນ ແລະ ໄດ້ປະສົບກັບບັນຫາຫຼາຍຢ່າງເຊັ່ນ: ອິນເຕີເນັດຊ້າ, ຄອມພິວເຕີ້ຊ້າເປີດເຄືອງໃຊ້ເວລາດົນ, ນັກຮຽນສ່ວນຫຼາຍຢູ່ເຂດຊົນນະບົດຫ່າງໄກຊອກຫຼີກ ບໍ່ມີສັນຍານອິນເຕີເນັດ ແລະ ບໍ່ສາມາດຂຶ້ນຫ້ອງຕາມກຳນົດເວລາໄດ້ ນອກຈາກນີ້ຄວາມສາມາດ ເທັກນິກການຜະລິດສື່ວິດີໂອການສອນຂອງຄູ-ອາຈານຍັງຈຳກັດ (Sisombath et al.,2022). ດັ່ງນັ້ນ, ການສຶກສາຄົ້ນຄວ້າໃນຄັ້ງນີ້ຈຶ່ງໃຊ້ຮູບແບບການຝຶກອົບຮົມການຜະລິດສື່ວິດີໂອສື່ການສຶກສາໃຫ້ແກ່ຄູ-ອາຈານ ພາຍໃນມະຫາວິທະຍາໄລ ສຸພານຸວົງ ເພື່ອພັດທະນາຂີດຄວາມສາມາດໃນການຜະລິດສື່ວິດີໂອ ສ້າງແຫຼ່ງການຮຽນຮູ້ທີ່ຫຼາກຫຼາຍໃຫ້ນັກຮຽນໄດ້ມີໂອກາດສຶກສາຄົ້ນຄວ້າຮ່ຳຮຽນດ້ວຍຕົນເອງຢ່າງສະດວກສະບາຍຫຼາຍຂຶ້ນ. ການສຶກສາຄົ້ນຄວ້າໃນຄັ້ງນີ້ ມີຈຸດປະສົງ ເພື່ອປັບປຸງທັກສະພື້ນຖານການຜະລິດສື່ວິດີໂອການສິດສອນ ແລະ ການສ້າງເວັບໄຊຂອງອາຈານ, ເພື່ອຊອກຫາບັນຫາໃນການຜະລິດສື່ວິດີໂອການສອນຂອງອາຈານ ແລະ ເພື່ອຊອກຫາປັດໄຈທີ່ຈະ

ສາມາດກະຕຸ້ນໃຫ້ອາຈານຜະລິດສື່ວິດີໂອການສອນຂອງຕົນເອງໃຫ້ຫຼາຍຂຶ້ນ.

## 2. ເຄື່ອງມື ແລະ ວິທີການຄົ້ນຄວ້າ

### 2.1 ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າ

ມະຫາວິທະຍາໄລ ສຸພານຸວົງ ມີ 6 ຄະນະວິຊາ 2 ຫ້ອງການ ແລະ 1 ສະຖາບັນ ມີຄູ-ອາຈານ ທັງໝົດ 399 ຄົນ ເຊິ່ງລວມທັງພະນັກງານທີ່ໄປຍົກລະດັບຕໍ່ຢູ່ພາຍໃນ ແລະ ຕ່າງປະເທດ ພະນັກງານບໍລິຫານເຮັດວຽກຫ້ອງການບໍ່ໄດ້ສອນ ແລະ ພະນັກງານວິຊາການໄດ້ສອນຕົວຈິງ (ຫ້ອງການຈັດຕັ້ງພະນັກງານ ມສ, 2024).

ການສຶກສາຄົ້ນຄວ້າໃນຄັ້ງນີ້ເປັນການສຶກສາແບບທົດລອງ ໂດຍເນັ້ນປະລິມານ ແລະ ຄຸນນະພາບໄປພ້ອມໆກັນ ສະນັ້ນ, ການກຳນົດກຸ່ມເປົ້າໝາຍໃນການຄົ້ນຄວ້າຈຶ່ງໄດ້ໃຊ້ຮູບແບບການໃຫ້ໂກຕ່າແຕ່ລະຄະນະວິຊາ ພາຍໃນມະຫາວິທະຍາໄລ ສຸພານຸວົງ ໂດຍເນັ້ນສະເພາະຜູ້ທີ່ຍັງບໍ່ທັນມີຄວາມຊຳນານທາງດ້ານໄອຊີທີ ດັ່ງຕາຕະລາງຂ້າງລຸ່ມນີ້:

**ຕາຕະລາງ 1 ຈຳນວນໂກຕ່າທີ່ຄັດເລືອກກຸ່ມເປົ້າໝາຍໃນການຄົ້ນຄວ້າ**

| ລ/ດ | ຄະນະວິຊາ | ຈຳນວນໂກຕ່າ |
|---|---|---|
| 1 | ຄະນະສຶກສາສາດ | 3 |
| 2 | ຄະນະເສດຖະສາດ ແລະ ການທ່ອງທ່ຽວ | 3 |
| 3 | ຄະນະກະເສດສາດ ແລະ ຊັບພະຍາກອນ ປ່າໄມ້ | 3 |
| 4 | ຄະນະວິສະວະກຳສາດ | 3 |
| 5 | ຄະນະສະຖາປັດຕະຍະກຳສາດ | 3 |
| 6 | ຄະນະ ພາສາສາດ | 3 |
| **ລວມ** | | **18** |

### 2.2 ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າ

ການສຶກສາຄົ້ນຄວ້າໃນຄັ້ງນີ້ເປັນການສຶກສາໂດຍເນັ້ນປະລິມານ ແລະ ຄຸນນະພາບ ເຊິ່ງການສຶກສາໄດ້ໃຊ້ການທົດລອງຝຶກອົບຮົມ ວິທີການອັດຄຼິບ ການສອນ ຜ່ານ ໜ້າຈໍຄອມພິວເຕີ ດ້ວຍໂປແກມ Ocam ແລະ ຖ່າຍທຳການສອນໃນຫ້ອງຮຽນໂດຍໃຊ້ກ້ອງຖ່າຍທຳ ຫຼື ໂທລະສັບ ສະມາດໂຟນ ແລະ ສອນວິທີການນຳເອົາຄຼິບທີ່ອັດມາຕັດຕໍ່ຕົບແຕ່ງສີສັນໃຫ້ເປັນຄຼິບວິດີໂອທີ່ສົມບູນແບບ ດ້ວຍໂປແກມ Capcut ແລະ Canva ພ້ອມທັງຝຶກສ້າງເວັບໄຊ ດ້ວຍ weebly.com ແລ້ວ ນຳເອົາຄຼິບວິດີໂອທີ່ຕັດຕໍ່ມານັ້ນໄປລົງໄວ້ໃນເວັບໄຊ ຊຶ່ງໄດ້ໃຊ້ເວລາການຝຶກອົບຮົມ 1 ອາທິດ ພ້ອມດຽວກັນນັ້ນ ແບບສອບຖາມແມ່ນໄດ້ໃຊ້ເພື່ອເກັບກຳຂໍ້ມູນຈາກນັກສຳມະນາກອນທັງໝົດ ເຊິ່ງໃນແບບສອບຖາມ ປະກອບມີ 2 ພາກສ່ວນ ຄື ພາກສ່ວນຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ແລະ ພາກສ່ວນຂໍ້ມູນກ່ຽວກັບສະພາບຄວາມຄິດເຫັນຂອງນັກສາມະນາກອນຕໍ່ກັບການຝຶກອົບຮົມ ກ່ຽວກັບການສ້າງສື່ການສອນຮູບແບບວິດີໂອ ແລະ ການສ້າງເວັບໄຊ ເຊິ່ງປະກອບມີທັງໝົດ 10 ຂໍ້ ເພື່ອນຳໃຊ້ເຂົ້າໃນການວິເຄາະຫາສະພາບບັນຫາ ຂໍ້ສະດວກ ຂໍ້ຫຍຸ້ງຍາກ ໃນການອັດຄຼິບ ຕັດຕໍ່ວິດີໂອ ແລະ ການສ້າງເວັບໄຊ ພ້ອມທັງສອບຖາມຄວາມຮູ້ສຶກພາຍຫຼັງຝຶກອົບຮົມ.

#### 2.2.1 ການສ້າງເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າ

ທີມງານຜູ້ຄົ້ນຄວ້າວິໃຈ ໄດ້ມີການອອກແບບ ແລະ ສ້າງຄູ່ມືວິທີການອັດຄຼິບ ແລະ ຕັດຕໍ່ຄຼິບວິດີໂອການສອນ ດ້ວຍໂປແກມ canva ແລະ capcut ພ້ອມດ້ວຍຄູ່ມືການສ້າງເວບໄຊ ດ້ວຍໂປແກມ weebly.com. ພ້ອມທັງສັງລວມຂໍ້ມູນທີ່ກ່ຽວຂ້ອງເພື່ອເປັນບ່ອນອີງໃນການສ້າງແບບສອບຖາມ ທີ່ຈະໃຊ້ເຂົ້າໃນການເກັບກຳຂໍ້ມູນ.

#### 2.2.2 ການຫາຄຸນນະພາບຂອງເຄື່ອງມື

ພາຍຫຼັງ ສ້າງຄູ່ມືການ ອັດຄຼິບ ຕັດຕໍ່ຄຼິບວິດີໂອ ແລະ ການສ້າງເວັບໄຊ ສຳເລດ ໄດ້ນຳຄູມືໄປໃຫ້ ອາຈານ 3 ທ່ານທົດລອງປະຕິບັດສ້າງຄຼິບ ແລະ ເວັບໄຊໄປຕາມຄູ່ມືທຸກຂັ້ນຕອນ ຈາກນັ້ນໃຫ້ຜູ້ທົດລອງໃຊຄູ່ມືລາຍງານບັນຫາທີ່ພົບເຫັນໃນລະຫວ່າງການປະຕິບັດຕາມຄູ່ມື ຫຼັງຈາກນັ້ນທີມງານຄົ້ນຄວ້າໄດ້ປັບປຸງແກ້ໄຂຄູ່ມືຄືນຕາມຈຸດຕ່າງໆ ທີ່ຍັງບໍ່ທັນຄົບຖ້ວນສົມບູນ ຈົນເຮັດໃຫ້ຜູ້ທົດລອງໃຊ້ຄູ່ມືສາມາດຜະລິດສື່ວິດີໂອ ແລະ ເວັບໄຊອອກມາໄດ້ສຳເລັດ.

ພາຍຫຼັງສ້າງແບບສອບຖາມສຳເລັດແມ່ນໄດ້ປິ່ນແບບສອບຖາມອອກມາ 3 ສະບັບ ແລ້ວນຳໄປໃຫ້ຜູ້ຊ່ຽວ ຊານດ້ານໄອທີ 3 ທ່ານກວດກາຄວາມສອດຄ່ອງຕາມຈຸດປະສົງຂອງການຄົ້ນຄວ້າ (ຄ່າ IOC) ຜົນການປະເມີນແບບສອບຖາມແຕ່ລະຂໍ້ ມີຄ່າລະເລຍຢູ່ໃນລະຫວ່າງ 0.66 - 1 ສະແດງວ່າທຸກຄຳຖາມມີຄວາມສອດຄ່ອງຕາມຈຸດປະສົງຂອງການຄົ້ນຄວ້າ. ພ້ອມກັນນີ້ທຸກຄຳຖາມໃນແບບສອບຖາມແມ່ນມີຄ່າຄວາມເຊື່ອໝັ້ນ Crobach's Alpha ຢູ່ທີ່ 0.957 ແລະ ມີຄ່າອຳນາດຈຳແນກຢູ່ທີ 0.45.

**2.3 ການເກັບກຳ ແລະ ຮ່ວບຮວມຂໍ້ມູນ**

ທີມງານຄົ້ນຄວ້າວິໃຈໄດ້ເຮັດແຈ້ງການຈາກທ່ານອະທິການບໍດີ ມະຫາວິທະຍາໄລ ສຸພານຸວົງ ສະບັບເລກທີ 203/ມສ ລົງວັນທີ 11 ມິຖຸນາ 2024. ເພື່ອໃຫ້ແຕ່ລະຄະນະວິຊາ ແລະ ຫ້ອງການ ສູນ ພາຍໃນມະຫາວິທະຍາໄລ ສຸພານຸວົງ ສົ່ງລາຍຊື່ພະນັກງານເຂົ້າຮ່ວມຝຶກອົບຮົມ ວຽກງານ ໄອທີ ໂດຍສະເພາະການອັດຄຼິບ ການຕັດຕໍ່ວິດີໂອ ການສອນ ແລະ ສ້າງເວັບໄຊ ເພື່ອເອົາຂໍ້ມູນບົດຮຽນລົງໄວ້ໃນລະບົບເວັບໄຊ. ພາຍຫຼັງໄດ້ລາຍຊື່ຜູ້ເຂົ້າຮ່ວມຝຶກອົບຮົມແລ້ວ ທີມງານຄົ້ນຄວ້າວິໃຈໄດ້ອອກຂໍ້ຕົກລົງອະທິການບໍດີ ສະບັບເລກທີ 510/ມສ. ລົງວັນທີ 02 ກໍລະກົດ 2024. ເພື່ອອຳນວຍຄວາມສະດວກໃຫ້ນັກສຳມະນາກອນໄດ້ເຂົ້າຮ່ວມຝຶກອົບຮົມຢ່າງເຕັມທີ່. ກອງປະຊຸມຝຶກອົບຮົບຈຶ່ງໄດ້ຈັດຂຶ້ນວັນທີ 8-12 ກໍລະກົດ 2024 ໂດຍໃຊ້ເວລາ 5 ວັນ ໃນລະຫວ່າງການຝຶກອົບຮົມ ນັກວິທະຍາກອນສາທິດໃຫ້ເບິ່ງ ແລະ ໄດ້ນຳພານັກສຳມະນາກອນປະຕິບັດຕາມເທື່ອລະຂັ້ນຕອນ ໄປພ້ອມໆກັນຕັ້ງແຕ່ຕົ້ນຈົນຈົບ ຫຼັງຈາກນັ້ນ ໃຫ້ເວລານັກສຳມະນາກອນທົດລອງປະຕິບັດເຮັດດ້ວຍຕົນເອງຄືນຫຼາຍຮອບໂດຍເບິ່ງຄູ່ມືຄືນ. ເມື່ອເວລາລືມຂັ້ນຕອນໃດໜຶ່ງ ຈົນເຮັດໃຫ້ນັກສຳມະນາກອນທຸກທ່ານສາມາດສຳເລັດການ ອັດຄຼິບ ຕັດຕໍ່ວິດີໂອການສອນ ແລະ ສ້າງເວັບໄຊດ້ວຍຕົນເອງ ຈາກນັ້ນໄດ້ໃຫ້ເວລານັກສຳມະນາກອນຂຶ້ນນຳສະເໜີ ສະແດງຜົນງານຂອງຕົນເອງ ຢ່າງເປັນທີ່ໜ້າເພິ່ງພໍໃຈ ແລະ ພາຍຫຼັງຝຶກອົບຮົມສຳເລັດ ທາງທີມງານຄົ້ນຄວ້າວິໃຈໄດ້ລວບລວມເອົາຜົນງານການຕັດຕໍ່ຄຼິບວິດີໂອການສອນ ແລະ ເວັບໄຊ ຂອງນັກສຳມະນາກອນທັງໝົດເພື່ອເປັນຂໍ້ມູນໃນການວິເຄາະ ແລະ ມື້ສຸດທ້າຍຂອງການຝຶກອົບຮົບ ທາງທີມງານກະໄດ້ສົ່ງລິ້ງແບບສອບຖາມລົງກຸ່ມວອດແອັບຂອງກອງປະຊຸມຝຶກອົບຮົມ ເພື່ອໃຫ້ນັກສຳມະນາກອນໄດ້ສະແດງຄວາມຄິດເຫັນຂອງຕົນເອງຕໍ່ກັບການຝຶກອົບຮົມ ເພື່ອນຳເອົາແນວຄວາມຄິດຈາກນັກສຳມະນາກອນມາເປັນຂໍ້ມູນໃນການວິເຄາະ.

**2.4 ການວິເຄາະຂໍ້ມູນ**

ພາຍຫຼັງເກັບກຳຂໍ້ມູນຜົນການທົດລອງ ແລະ ສັງເກດສະພາບການປະຕິບັດໂຕຈິງຂອງນັກສຳມະນາກອນ ແລ້ວໄດ້ນຳຂໍ້ມູນມາວິເຄາະໂດຍການພັນລະນາ ຕາມສະພາບຄວາມເປັນຈິງຜົນງານຕົວຈິງ. ສ່ວນຂໍ້ມູນທີ່ໄດ້ຈາກແບບສອບຖາມແມ່ນໄດ້ນຳມາວິເຄາະໂດຍໃຊ້ໂປແກມ SPSS version 20 ເພື່ອຫາຄ່າ % ແລະ ສົມຜົນ Regression Linear ວິເຄາະຫາຄວາມສຳພັນ ແລະ ອິດທິພົນຕໍ່ການກະຕຸ້ນໃຫ້ອາຈານ ສ້າງສື່ວິດີໂອການສອນໃຫ້ຫຼາຍຂຶ້ນ ຊຶ່ງຄ່າ Sig<0.05.

**3. ຜົນໄດ້ຮັບ**

ທັກສະການອັດຄຼິບການສອນ ຕັດຕໍ່ຄຼິບວິດີໂອ ເຫັນວ່ານັກສຳມະນາກອນສາມາດຮູ້ ແລະ ນຳໃຊ້ເຄື່ອງມືໄອຊີທີ Applications ນຳໃຊ້ໂປແກມ Ocam ອັດຄຼິບການສອນການບັນຍາຍຜ່ານໜ້າຈໍຄອມພິວເຕີ ໄດ້ທັງໝົດໂດຍພື້ນຖານ 100 % ແລະ ຄຸນນະພາບຂອງຄຼິບທີ່ອັດອອກມາມີຄຸນນະພາບດີ ເຊັ່ນ ພາບກ້ອງຖ່າຍຜູ້ບັນຍາຍແຈ້ງເຫັນໜ້າຊັດເຈນ ສຽງຈາກຜູ້ບັນຍາຍແຈ້ງຟັງໄດ້ຍິນສຽງອະທິບາຍຈາກຜູ້ບັນຍາຍຊັດເຈນ ສາມາດເຫັນເນື້ອໃນບົດຮຽນທີ່ສອນໂຕໜັງສືແຈ້ງດີ ຄຼິບບໍ່ຄ້າງກະຕຸກກະຕັກ ກວມ 55.55%. ພາບກ້ອງຖ່າຍຜູ້ບັນຍາຍມົວບໍ່ເຫັນໜ້າຊັດເຈນ ສຽງຈາກຜູ້ບັນຍາຍຄ້າງເປັນຕອນມີສຽງກຸກໆກັກໆ ຟັງບໍ່ໄດ້ຫຍິນສຽງອະທິບາຍຈາກຜູ້ບັນຍາຍຊັດເຈນ ເນື້ອໃນບົດຮຽນທີ່ສອນລາຍໂຕໜັງສືບໍ່ແຈ້ງດີ ຄຼິບຄ້າງກະຕຸກກະຕັກບັນຫາເກີດຈາກລະບົບ ແລະ ສະເປັກຄອມພິມເຕີ້ລຸ້ນເກົ່າຫຼາຍ ກວມ 22.22%. ພາບກ້ອງຖ່າຍຜູ້ບັນຍາຍແຈ້ງເຫັນໜ້າຊັດເຈນ ແຕ່ບໍ່ໄດ້ຍິນສຽງຈາກຜູ້ບັນຍາຍ ບັນຫາເກີດຈາກ ລະບົບສຽງຄອມພິວເຕີ ຫຼື ໄດເວີ່ຊອບແວສຽງ (Sound Driver) ມີບັນຫາ ສາມາດເຫັນເນື້ອໃນບົດຮຽນທີ່ສອນໂຕໜັງສືແຈ້ງດີ ຄຼິບບໍ່ຄ້າງກະຕຸກກະຕັກກວມ 11.11%. ຄຼິບທີ່ອັດອອກມາບໍ່ສຳເລັດຄອມຄ້າງຄຼິບບໍ່ສາມາດນຳມາໃຊ້ໄດ້ບັນຫາເກີດຈາກຄອມພິວເຕີສະເປັກຕ່ຳ ແລະ ລຸ້ນເກົ່າແກ່ຫຼາຍ ກວມ 11.11%. (ຕາຕະລາງ 2). ດ້ານຄວາມສາມາດໃນການອັດຄຼິບການສອນ ຕັດຕໍ່ຄຼິບວິດີໂອ ຜ່ານການວິເຄາະສັງເກດຜົນງານຂອງນັກສຳມະນາກອນທຸກທ່ານເຫັນວ່ານັກສຳມະນາກອນສາມາດຮູ້ ແລະ ນຳໃຊ້ເຄື່ອງມືໄອຊີທີ Applications ນຳໃຊ້ໂປແກມ Canva ແລະ Cap cut ຕັດຕໍ່ຄຼິບວິດີໂອ ໄດ້ທັງໝົດໂດຍພື້ນຖານ 100 %. ສ່ວນວ່າຄຸນນະພາບຂອງຄຼິບວິດີໂອທີ່ຕັດຕໍ່ສາເລັດອອກມາມີຄຸນນະພາບດີເຊັ່ນ: ພາບແຈ້ງ ສຽງແຈ້ງຊັດເຈນ ມີການໃສ່ເອັບເຟັກປະກອບພາບເຄື່ອນໄຫວ ມີການໃສ່ຄຼິບສຽງເສບດົນຕີປະກອບ ມີການໃສ່ Transition ລະຫວ່າງຄຼິບທີ່ເອົາມາຕໍ່ໃສ່ກັນ ມີການໃສ່ຕົວໜັງສື ປະກອບສຽງບັນຍາຍແຕ່ລະຕອນ ພາບ ແລະ ສຽງບໍ່ມີຄ້າງກະຕຸກກະຕັກ ກວມ 44.44 %. ພາບແຈ້ງ ສຽງແຈ້ງຊັດເຈນ ມີການໃສ່ເອັບເຟັກປະກອບພາບເຄື່ອນໄຫວ ມີການໃສ່ຄຼິບສຽງເສບດົນຕີປະກອບ ມີການໃສ່ Transition ລະຫວ່າງຄຼິບທີ່ເອົາມາຕໍ່ໃສ່ກັນ ມີການໃສ່ຕົວໜັງສື ປະກອບສຽງບັນຍາຍແຕ່ລະຕອນ ພາບ ແລະ ສຽງຄ້າງກະຕຸກກະຕັກບາງຕອນລະຫວ່າງຄຼິບ ກວມ 27.77 %.ພາບແຈ້ງ ສຽງແຈ້ງຊັດເຈນ ມີການໃສ່ Transition ລະຫວ່າງຄຼິບບາງຕອນທີ່ເອົາມາຕໍ່ໃສ່ກັນພາບ ແລະ ສຽງບໍ່ມີຄ້າງກະຕຸກກະຕັກແຕ່ຕົ້ນຈົນຈົບຄຼິບ ກວມ 16.66 %. ການຕັດຕໍ່ມີບັນຫາ ຄອມຊ້າ ເຊີ່ມອິນເຕີເນັດຍາກ ຕັດຕໍ່ແລ້ວ ບັນທຶກຟາຍວິດີໂອອອກໄປໃຊ້ບໍ່ໄດ້ ກວມ 11.11 %. (ຕາຕະລາງ 3)ເຊິ່ງສາມາດເບິ່ງຄຸນນະພາບຂອງບາງວິດີໂອທີ່ສຳມະ

ນາກອນຕັດຕໍ່ອອກມາໄດ້ທີ່ https://www.youtube.com/watch?v=4 p9 T2 xIn7 lc ; https://www.youtube.com/watch?v=9 S1 PpLLF3 u0 ; https://www.youtube.com/watch?v=u4 k4 5 UZ5 lzM ; https://youtu.be/eMbWoexGFLY. ດ້ານຄວາມສາມາດໃນການສ້າງເວັບໄຊໂດຍ weebly.com ຜ່ານການວິເຄາະສັງເກດຜົນງານຂອງນັກສຳມະນາກອນທຸກທ່ານເຫັນວ່ານັກສຳມະນາກອນສາມາດຮູ້ ແລະ ສ້າງ ເວັບໄຊເປັນຂອງຕົນເອງ ໄດ້ທັງໝົດໂດຍພື້ນຖານ 100 %. ສ່ວນຄຸນນະພາບຂອງເວັບໄຊທີ່ນັກສຳມະນາກອນໄດ້ສ້າງຂຶ້ນມາເພື່ອຈະນຳໄປໃຊ້ໃນການຈັດການຮຽນການສອນຂອງຕົນເອງເຊັ່ນ ສາມາດສ້າງເວັບໄຊ ມີລະຫັດ (Account) ເປັນຂອງຕົນເອງ ສຳເລັດໝົດທຸກຄົນ ກວມ 100 %. ໃນນັ້ນມີເວັບໄຊທີ່ ໄດ້ເອົາບົດຮຽນຈຳນວນໜຶ່ງອັບໂລດລົງ (Upload) ໄດ້ເອົາຮູບພາບກິດຈະກຳການຮຽນ ອັບໂລດລົງ ໄດ້ເອົາວິດີໂອທີ່ຜ່ານການຕັດຕໍ່ ລົງຊ່ອງ YouTube ແລະ ເອົາມາອັບໂລດລົງເວັບໄຊໜ້າເວັບໄດ້ມີການຈັດລຳດັບຂໍ້ມູນຄ້ອນຂ້າງລະອຽດພໍສົມຄວນເຊັ່ນ ໜ້າເວັບໄດ້ໃສ່ພາບພື້ນຫຼັງທີ່ເປັນສັນຍາລັກຂອງອົງກອນ ໜ້າຫຼັກ ມີແຜ່ນວາດໂຄງຮ່າງການຈັດຕັ້ງ ມີຮູບພາບການຈັດກິດຈະກຳ ແລະ ມີວິດີໂອພາບເຄື່ອນໄຫວກິດຈະກຳອີກດ້ວຍ, ໜ້າ ຂໍ້ມູນ ແລະ ເອກະສານ ໄດ້ໃສ່ພາບການເຄືອນໄຫວກິດຈະກຳຕ່າງໆ ມີບົດຮຽນເພື່ອການຮຽນຮູ້ ແລະ ອື່ນໆ, ໜ້າເມນູ ກິດຈະກຳ ແລະ ພາບເຄື່ອນໄຫວ ໄດ້ໃສ່ຂໍ້ມູນຮູບພາບກິດຈະກຳການຮຽນການສອນຕ່າງໆ, ນ້ອກຈາກນີ້ຍັງໄດ້ໃສ່ຂໍ້ມູນຕິດຕໍ່ພົວພັນ ການຮ່ວມມືກັບພາຍໃນ ແລະ ຕ່າງປະເທດ ເຊີ່ງສາມາດເຂົ້າຊົມເວັບໄຊໄດ້ທີ່ https://koreandpsu.weebly.com/ ນອກຈາກນີ້ ສ່ວນໃຫຍ່ແລ້ວ ແມ່ນສຳມະນາກອນສ້າງ Account ເວັບໄຊສຳເລັດ ໄດ້ເອົາຂໍ້ມູນລົງເລັກນ້ອຍ ຍັງບໍ່ທັນຫຼາກຫຼາຍ ເຊັ່ນ https://teachinglaolanguage. weebly. com/ ; ຜ່ານການວິເຄາະຂໍ້ມູນຂ້າງເທິງສາມາດເຫັນໄດ້ວ່າ ການຝຶກອົບຮົມໃນຄັ້ງນີ້ສາມາດເຮັດໃຫ້ນັກສຳມະນາກອນ ອາຈານ ພາຍໃນມະຫາວິທະຍາໄລ ສຸພານຸວົງ ພັດທະນາພື້ນຖານການສ້າງສື່ການສອນໂດຍການສ້າງວິດີໂອການສອນ ການອັດຄຼິບການສອນ ການຕັດຕໍ່ຄຼິບວິດີໂອ ແລະ ການສ້າງເວັບໄຊ ເພື່ອເປັນແຫຼ່ງເກັບກຳຂໍ້ມູນບົດຮຽນ ແລະ ກິດຈະກຳການຮຽນການສອນ ເພື້ອໃຫ້ນັກຮຽນສາມາດເຂົ້າເບິ່ງ ຄົ້ນຫາຂໍ້ມູນທີ່ກ່ຽວຂ້ອງກັບການຮຽນການອນໄດ້ຫຼາຍຂຶ້ນ ແລະ ສະດວກຂຶ້ນ ເຖິງວ່າການຝຶກອົບຮົມໂດຍໃຊ້ເວລາສັ້ນ ແຕ່ນັກສຳມະນາກອນຍັງສາມາດເກັບກຳຂັ້ນຕອນ ຂະບວນການ ແລະ ວິທີການ ໃນການສ້າງວິດີໂອການສອນ ການສ້າງເວັບໄຊ ອອກມາໄດ້ສຳເລັດໂດຍພື້ນຖານ ແລະ ຍັງມີແນວໂນ້ມທີ່ຈະໄດ້ນຳໄປພັດທະນາຕໍ່ໃຫ້ມີຄວາມເປັນມືອາຊີບຂຶ້ນໄປເລື້ອຍໆ.

ບັນຫາໃນການສ້າງວິດີໂອການສອນ ແລະ ການສ້າງເວັບໄຊ ຈາກການສັງເກດການເວລາປະຕິບັດຕົວຈິງໃນການສ້າງ ຄຼິບຕັດຕໍ່ຄຼິບວິດີໂອ ແລະ ການສ້າງເວັບໄຊ ບວກກັບຄຳຄິດເຫັນຂອງນັກສຳມະນາກອນໃນແບບສອບຖາມ ເຫັນວ່າ ບັນຫາຫຼັກໃນການສ້າງ ຄຼິບ ຕັດຕໍ່ຄຼິບວິດີໂອ ແລະ ການສ້າງເວັບໄຊ ແມ່ນຄອມພິວເຕີສະເປັກຕ່ຳ ຈຶ່ງບໍ່ສາມາດຮອງຮັບ ແລະ ລົ້ມໄດ້ບາງໂປແກມ ພ້ອມກັນນັ້ນຍັງຊ້າ ເຊື່ອມອິນເຕີເນັກກະຊ້າ ເປີດໂປແກມກະຊ້າ ແລະ ບາງຄັ້ງຍັງຄ້າງເລີຍ ຈຶ່ງໄດ້ຣີສະຕາດເຄື່ອງໃໝ່ເລື້ອຍໆ ເຊິ່ງກວມ 66.66%ທັດມາແມ່ນບໍ່ມີຄວາມຮູ້ພື້ນຖານດ້ານຄອມພິວເຕີ ກວມ 55,55% ທັດມາແມ່ນ ໂທລະສັບມືຖືຍັງແມ່ນລຸ້ນເກົ່າ ສະເປັກຕ່ຳບໍ່ສາມາດຕັດຕໍ່ຄຼິບໄດ້ 44.44% ສຸດທ້າຍ ແມ່ນ ອິນເຕີເນັດຊ້າຫຼາຍ 38,88 % (ຕາຕະລາງ 4).

ປັດໄຈທີ່ຈະສາມາດກະຕຸ້ນໃຫ້ອາຈານຜະລິດສື່ວິດີໂອການສອນຂອງຕົ້ນໃຫ້ຫຼາຍຂຶ້ນ ມີທັງໝົດ 6 ປັດໄຈທີນຳມາວິເຄາະ ຄື 1) ປັດໄຈດ້ານການຝຶກອົບຮົມໃຫ້ຄູ-ອາຈານໃຫ້ທົ່ວເຖິງ; 2) ປັດໄຈດ້ານ ຄ່າແຮງງານການຜະລິສື່ວິດີໂອ; 3) ປັດໄຈດ້ານການອອກຂໍ້ກຳນົດໃຫ້ອາຈານແຕ່ລະວິຊາ ຕ້ອງມີວິດີໂອການສອນຂອງຕົນເອງລົງໃນເວັບ ຫຼື ຖານຂໍ້ມູນຂອງຫ້ອງການທີ່ກ່ຽວຂອ້ງ; 4) ປັດໄຈດ້ານການສົ່ງເສີມການສ້າງ ຫຼື ຜະລິດສື່ ວິດີໂອ ເຊັ່ນການໃຫ້ລາງວັນ ຫຼື ການຍ້ອງຍໍປະເພດຕ່າງໆ; 5) ປັດໄຈດ້ານການສ້າງສິ່ງອຳນວຍຄວາມສະດວກ ເຊັ່ນການຈັດຫາເຄື່ອງອັດຄຼິບທີ່ທັນສະໄໝ ເປັນຕົ້ນກ້ອງຖ່າຍວິດີໂອທີ່ມີຄຸນນະພາບດີ ມີຫ້ອງ Studio ອັດຄຼິບສະເພາະໃຫ້ພະນັກງານໄດ້ໃຊ້ບໍລິການ; 6) ປັດໃຈດ້ານການບໍລິ ການລະບົບອິນເຕີເນັດທີ່ວ່ອງໄວ ແລະ ມີຄຸນະພາບດີ. ຈາກ 6 ປັດໄຈດັ່ງກ່າວນີ້ສາມາດກະຕຸ້ນໃຫ້ອາຈານຜະລິດສື່ວິດີໂອການສອນຂອງຕົນເອງໃຫ້ຫຼາຍຂຶ້ນ ເຖິງ 63.60 % ແລະ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.001 ດັ່ງທີ່ (ຕາຕະລາງ 5). ໃນນັ້ນປັດໄຈທີ່ມີຄວາມສຳພັນຕໍ່ກັບ ການກະຕຸ້ນໃຫ້ອາຈານຜະລິດສື່ວິດີໂອຫຼາຍທີ່ສຸດແມ່ນ ປັດໄຈດ້ານການບໍລິການລະບົບອິນເຕີເນັດທີ່ວ່ອງໄວ ແລະ ມີຄຸນະພາບດີ ກວມ 79.80 % ຮອງລົງມາແມ່ນ ປັດໄຈດ້ານ ການອອກຂໍ້ກຳນົດໃຫ້ອາຈານແຕ່ລະວິຊາ ຕ້ອງມີວິດີໂອການສອນຂອງຕົນເອງ ລົງໃນເວບ ຫຼື ຖານຂໍ້ມູນຂອງຫ້ອງການທີ່ກ່ຽວຂອ້ງ ກວມ 30.30 % ແລະ ສຸດທ້າຍແມ່ນ ປັດໄຈດ້ານ ຄ່າແຮງງານການຜະລິສື່ວິດີໂອ ກວມ 27.90 % ແລະດ້ວຍລະດັບຄວາມສຳຄັນທາງສະທິຕິນ້ອຍກົ່ວ 0.05 ດັ່ງທີ່ເຫັນໃນ (ຕາຕະລາງ 6).

## 4. ວິພາກຜົນການຄົ້ນຄວ້າ

ຈາກຜົນການສຶກສາໃນຄັ້ງນີ້ພົບວ່າພາຍຫຼັງການຝຶກອົບຮົມການອັດຄຼິບການສອນ ຕັດຕໍ່ຄຼິບວິດີໂອ ເຫັນວ່ານັກສຳມະນາກອນສາມາດພັດທະນາທັກສະການນຳໃຊ້ເຄື່ອງມືໄອຊີທີ Applications ນຳໃຊ້ໂປແກມ Ocam ອັດຄຼິບການສອນການ

ບັນຍາຍຜ່ານໜ້າຈໍຄອມພິວເຕີ ໄດ້ທັງໝົດ ແຕ່ຄຸນນະພາບຂອງຄຼິບທີ່ອັດອອກມາສ່ວນຫຼາຍແມ່ນມີຄຸນນະພາບດີ ແຕ່ຍັງມີອີກຈຳນວນຫຼາຍແມ່ນຄຸນນະພາບຕໍ່າ ຍັງມີບາງຄຼິບເຖິງຂັ້ນໃຊ້ບໍ່ໄດ້ ບັນຫາເກີດຈາກຄອມພິວເຕີສະເປັກຕໍ່າ ແລະ ລຸ້ນເກົ່າແກ່ຫຼາຍ. ຄວາມສາມາດໃນການອັດຄຼິບການສອນ ຕັດຕໍ່ຄຼິບວິດີໂອ ພົບວ່ານັກສຳມະນາກອນທຸກທ່ານສາມາດຮູ້ ແລະ ນຳໃຊ້ເຄື່ອງມືໄອຊີທີ Applications ນຳໃຊ້ໂປແກມ Canva ແລະ Cap cut ຕັດຕໍ່ຄຼິບວິດີໂອ ໄດ້ທັງໝົດໂດຍພື້ນຖານ. ແຕ່ຄຸນນະພາບຄຼິບວິດີໂອທີ່ດີແມ່ນບໍ່ຮອດ 50 % ແລະ ບາງທ່ານຄອມບໍ່ສາມາດ export file ອອກມາໄຊ້ໄດ້ຍ້ອນການຕັດຕໍ່ມີບັນຫາ ຄອມພິວເຕີຊ້າ ເຊື່ອມອິນເຕີເນັດຍາກ ຕັດຕໍ່ແລ້ວ ເຊັບຟາຍວິດີໂອອອກໄປໃຊ້ບໍ່ໄດ້. ດ້ານຄວາມສາມາດໃນການສ້າງເວັບໄຊໂດຍ weebly.com ພົບວ່ານັກສຳມະນາກອນທຸກທ່ານ ສາມາດຮູ້ ແລະ ສ້າງ ເວັບໄຊເປັນຂອງຕົນເອງ ໄດ້ທັງໝົດໂດຍພື້ນຖານ. ສ່ວນຄຸນນະພາບຂອງເວັບໄຊທີ່ນັກສຳມະນາກອນໄດ້ສ້າງຂຶ້ນມາເພື່ອຈະນຳໄປໃຊ້ໃນການຈັດການຮຽນການສອນຂອງຕົນເອງເຊັ່ນ ສາມາດສ້າງເວັບໄຊ ມີລະຫັດ Account ເປັນຂອງຕົນເອັງ ສຳເລັດໝົດທຸກທ່ານ. ແຕ່ສ່ວນຫຼາຍແມ່ນຍັງຕ້ອງໄດ້ປັບປຸງໃຫ້ເວັບໃຫ້ມັນສົມບູນຂຶ້ນ ໂດຍການອັບຂໍ້ມູນບົດຮຽນ ກິດຈະກຳການຮຽນທີ່ຫຼາກຫຼາຍລົງຕື່ມ ພ້ອມທັງຕົບແຕ່ງໜ້າເວັບໃຫ້ມັນງົດງາມເປັນໜ້າປະທັບໃຈຂຶ້ນ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ Ratheeswari, (2018) ໄດ້ສະຫຼຸບໄວ້ວ່າຄູມີຄວາມຈຳເປັນຕ້ອງມີຄວາມຮູ້ ແລະ ທັກຊະໃນການໃຊ້ເຄື່ອງມືດີຈິຕອນໃໝ່ໆ ເຊິ່ງຄວາມສາມາດໃນການນຳໃຊ້ເຄື່ອງມືໄອຊີທີດັ່ງກ່າວເຂົ້າໃນການສິດສອນຈະເຮັດໃຫ້ຄຸນນະພາບຂອງການສອນຈະເພີ່ມຂຶ້ນຢ່າງມີປະສິດທິຜົນ ແລະ ຍັງສອດຄ່ອງກັບ Guseva, et al., (2018) ໄດ້ພັດທະນາ ແລະ ສົ່ງເສີມທັກຊະການສ້າງວິດີໂອການສອນທີ່ດີ ໂດຍການຈັດ work shop ຝຶກທັກຊະຕ່າງໆກ່ຽວກັບການສ້າງວິດີໂອເຊັ່ນ: ທັກຊະການນຳສະເໜີ, ເທັກນິກການໃສ່ສະຄຼິບວິດີໂອຂັ້ນສູງ ແລະ ການນຳໃຊ້ ເຄື່ອງສົ່ງສັນຍານທາງໄກ ຊຶ່ງການສຶກສາດັ່ງກ່າວໄດ້ພົບວ່າ ການສ້າງວິດີໂອສະໜັບສະໜູນການຮຽນຮູ້ຍັງເປັນສິ່ງທ້າທາຍຫຼາຍ ທັກຊະການໃຊ້ສາຍຕາ, ນໍ້າສຽງ, ທ່າທີໃນການບັນຍາຍຂອງຄູ-ອາຈານ ທີ່ຢູ່ຕໍ່ ໜ້ານັກຮຽນໃນຫ້ອງຮຽນ ຫຼື ຢູ່ເທິງເວທີ ແມ່ນມີຄວາມແຕກຕ່າງກັບການບັນຍາຍຢູ່ໜ້າກ້ອງຖ່າຍ.

ບັນຫາທີ່ພົບເຫັນໃນການສ້າງວິດີໂອການສອນ ແລະ ການສ້າງເວັບໄຊ ແມ່ນຄອມພິວເຕີ ສະເປັກຕໍ່າ ຈຶ່ງບໍ່ສາມາດຮອງຮັບ ແລະ ຫຼິ້ນໄດ້ບາງໂປຼແກຼມ ພ້ອມກັນນັ້ນຍັງຊ້າ ເຊື່ອມອິນເຕີເນັດຊ້າ ເປີດໂປຼແກຼມກະຊ້າ ແລະ ບາງຄັ້ງຍັງຄ້າງ ຈຶ່ງໄດ້ເປີດເຄື່ອງຄືນໃໝ່ເລື້ອຍໆ ເຊິ່ງສອດຄ່ອງກັບ Faber, (2020) ພົບວ່າຄອມພິວເຕີທີ່ມີສະເປັກຕໍ່າ, ຮາດແວທີ່ບໍ່ພຽງພໍຕໍ່ສູ້ກັບການແລ່ນຊອບແວໄດ້ຢ່າງຄ່ອງແຄ້ວ, ບັນຫາຊອບແວ, ໂປຼແກຼມອາດຈະໂຫຼດຊ້າ, ຄ້າງ ຫຼື ຂັດຂ້ອງ ແລະ ເຮັດໃຫ້ເກີດບັນຫາໃນການໃຊ້ງານ. Reddick & Turner, (2012) ພົບວ່າ ອິນເຕີເນັດຄວາມໄວ້ຊ້າເຊິ່ງເຮັດໃຫ້ບໍ່ສາມາດອັບໂຫຼດ ວິດີໂອໄດ້ໃນລະບົບອອນລາຍໄດ້. Fisher, (2021) and North, (2019) ຢືນຢັນວ່າ ຄວາມຮູ້ດ້ານຄອມພິວເຕີທີ່ຈຳກັດ ຜູ້ເລີ່ມຮຽນໃໝ່ອາດຈະປະເຊີນກັບບັນຫາການບັນທຶກວິດີໂອແລະເຄື່ອງມືການແກ້ໄຂວິດີໂອ ຊຶ່ງເປັນສິ່ງທ້າທາຍ ຕໍ່ຄວາມເຂົ້າໃຈເຕັກນິກການແກ້ໄຂທີ່ມີປະສິດທິພາບ.

ປັດໃຈທີ່ທີ່ມີຄວາມສຳພັນກັບການກະຕຸ້ນໃຫ້ອາຈານຜະລິດສື່ວິດີໂອການສອນຂອງຕົ້ນໃຫ້ຫຼາຍຂຶ້ນແມນ ປັດໃຈດ້ານການບໍລິການລະບົບອິນເຕີເນັດທີ່ວ່ອງໄວ ແລະ ມີຄຸນະພາບດີ, ປັດໃຈດ້ານ ການອອກຂໍ້ກຳນົດໃຫ້ອາຈານແຕ່ລະວິຊາ ຕ້ອງມີວິດີໂອການສອນຂອງຕົນເອງ ລົງໃນເວບ ຫຼື ຖານຂໍ້ມູນຂອງຫ້ອງການທີ່ກ່ຽວຂອ້ງ ແລະ ປັດໃຈດ້ານ ຄ່າແຮງງານການຜະລິດສື່ວິດີໂອ ແລະ ດ້ວຍລະດັບຄວາມສຳຄັນທາງສະທິຕິ ນ້ອຍກວ່າ 0.05. ຊຶ່ງສອດຄ່ອງກັບການຄົ້ນຄວ້າຂອງ Harris and Rea, (2019) ແລະ Peters & Roberts, (2020) ພົບວ່າ ໂອກາດການຝຶກອົບຮົມ: ຈັດກອງປະຊຸມ ແລະ ການຝຶກອົບຮົມທີ່ສອນທັກສະການຜະລິດວິດີໂອ ແລະ ການຕັດຕໍ່ແກ້ໄຂວິດີໂອ ສາມາດເພີ່ມຄວາມຫມັ້ນໃຈ ແລະ ຄວາມສາມາດທີ່ຈະຮ່ວມມືກັບເພື່ອນຮ່ວມງານໃນໂຄງການວິດີໂອສາມາດເສີມສ້າງແຮງຈູງໃຈ ແລະ ມີຄວາມຄິດສ້າງສັນທີ່ດີ.

## 5. ສະຫຼຸບ

ຜ່ານການຄົ້ນຄວ້າໂດຍການຈັດຝຶກອົບຮົມໃນຄັ້ງນີ້ສາມາດເຫັນໄດ້ວ່ານັກສຳມະນາກອນສາມາດຮຽນຮູ້ພື້ນຖານການສ້າງວິດີໂອຊ່ວຍສອນຂອງຕົນເອງ ເຊັ່ນ ການອັດຄຼິບການສອນຜ່ານໜ້າຈໍຄອມພິວເຕີ່ໂດຍໃຊ້ໂປແກມ Ocam ການນຳເອົາຄຼິບທີ່ອັດມາຕັດຕໍ່ ໂດຍໃຊ້ໂປແກມ Capcut ແລະ Canva ພ້ອມດຽວກັນນັ້ນນັກສຳມະນາກອນຍັງຮຽນຮູ້ການສ້າງເວັບໄຊ ເພື່ອເປັນແຫຼ່ງສະສົມບົດຮຽນ ກິດຈະກຳການຮຽນ ຕ່າງໆເປັນຂອງຕົນເອງ ໂດຍ weebly.com. ສາມາດເຫັນໄດ້ການພັດທະນາການສ້າງສື່ການສອນ ໂດຍຜ່ານຜົນງານການຕັດຕໍ່ວິດີໂອການສອນຂອງນັກສຳມະນາກອນກຸ່ມເປົ້າໝາຍການຄົ້ນຄວ້າ ທີ່ສາມາດຕັດຕໍ່ຕົບແຕ່ງຄຼິບວິດີໂອລົງຊ່ອງ Youtube, Face book, Tiktok ແລະ ເວັບໄຊໄດ້ ຊຶ່ງບັນດາຄວາມຮູ້ພື້ນຖານທີ່ນັກສຳມະນາກອນ ກໍ່ຄືກຸ່ມເປົ້າໝາຍໃນການຄົ້ນຄວ້າ ໄດ້ຮຽນຮູ້. ເຖິງຈະມີພື້ນຖານເບື້ອງຕົ້ນຈາກການການຝຶກອົບຮົມກໍ່ຕາມ ນັກສາມະນາກອນຍັງຕ້ອງໄດ້ສືບຕໍ່ຜັນຂະຫຍາຍພັດທະນຳທັກສະການນຳໃຊ້ເຄື່ອງມື ໄອຊີທີໃຫ້ມີຄວາມຄ່ອງແຂ້ວຂຶ້ນຕື່ມ ສືບຕໍ່ຝຶກປະຕິບັດການໃຊ້ງານຕົວຈິງເພື່ອໃຫ້ມີຄວາມຊຳນານຂຶ້ນເລື້ອຍໆ.

ໃນລະຫວ່າງການຈັດຕັ້ງປະຕິບັດການອັດຄຼິບ ການຕັດຕໍ່ຄຼິບ ແລະ ການສ້າງເວບໄຊ ຕົວຈິງນັ້ນ ສາມາດສະຫຼຸບບັນຫາພື້ນຖານທີ່ກຸ່ມເປົ້າໝາຍໄດ້ປະເຊີນເຊັ່ນວ່າ ຄອມສະເປັກຕໍ່າ ຊັກຊ້າ ມີຫຼາຍໂປແກມບໍ່ສາມາດຫຼິ້ນໄດ້ ໃຊ້ເນັດຍາກ ອິນເຕີເນັດກໍ່ຊ້າ ບໍ່ສາມາດດາວໂຫຼດ ຫຼື ອັບໂຫຼດຂໍ້ມູນໄດ້ ຊຶ່ງບັນຫາຕ່າງໆເຫຼົ່ານີ້ລ້ວນແລ້ວແຕ່ເປັນອຸປະສັກໃນການພັດທະນາວຽກງານການສິດສອນໃນຍຸກດິຈິຕອນ ຍຸກແຫ່ງຂໍ້ມູນຂ່າວສານໄຮ້ພົມແດນ. ພ້ອມດຽວກັນນັ້ນ ບັນຫາດ້ານຄວາມຮູ້ຄວາມສາມາດໃນການນຳໃຊ້ເຄື່ອງມືໄອຊີທີ ຂອງບຸກຄະລາກອນ ກໍ່ຍັງເປັນອີກບັນຫາໜຶ່ງທີ່ຍັງຈະຕ້ອງໄດ້ພັດທະນາໄປຄຽງຄູ່ກັບການພັດທະນາວຽກງານ ໄອຊີທີ. ຈາກບັນຫາດັ່ງກ່າວນີ້ ການຈັດຫາສິ່ງອຳນວຍຄວາມສະດວກໃຫ້ແກ່ຄູ-ອາຈານໂດຍສະເພາະເຄື່ອງຄອມພິວເຕີຕ້ອງເປັນສະເປັກທີ່ຄ້ອນຂ້າງສູງ ເພື່ອໃຫ້ສາມາດຕອບສະໜອງຕາມຍຸກຂອງເຕັກໂນໂລຊີທີ່ໄດ້ມີການພັດທະນາຢູ່ເລື້ອຍໆ. ພ້ອມດຽວກັນນັ້ນບຸກຄະລາກອນກະຕ້ອງໄດ້ມີການພັດທະນາຕົນເອງຢູ່ເລື້ອຍໆໂດຍສະເພາະໂດຍສະເພາະການນຳໃຊ້ເຄື່ອງມືໄອຊີທີ ເພື່ອມາປະກອບເຂົ້າການປະຕິບັດວຽກງານຕົວຈິງ.

ນອກຈາກນີ້ ການສຶກສາຄົ້ນຄວ້າຍັງສາມາດສະຫຼຸບໄດ້ບາງປັດໄຈທີ່ຈະສາມາດກະຕຸ້ນໃຫ້ບັນດາພະນັກງານ ອາຈານ ສ້າງສື່ການສອນຮູບແບບວີດີໂອ ແລະ ສ້າງເວັບໄຊແຫຼ່ງເກັບກຳຂໍ້ມູນບົດຮຽນ ກິດຈະກຳການສິດສອນຂອງຕົນເອງໃຫ້ຫຼາຍຂຶ້ນ ຄືປັດໄຈດ້ານການຝຶກອົບຮົບໃຫ້ຄູ-ອາຈານໃຫ້ທົ່ວເຖິງ; ປັດໄຈດ້ານ ຄ່າແຮງງານການຜະລິດສື່ວີດີໂອ; ປັດໄຈດ້ານການອອກຂໍ້ກຳນົດໃຫ້ອາຈານແຕ່ລະວິຊາ ຕ້ອງມີວີດີໂອການສອນຂອງຕົນເອງ ລົງໃນເວັບ ຫຼື ຖານຂໍ້ມູນຂອງຫ້ອງການທີ່ກ່ຽວຂ້ອງ; ປັດໄຈດ້ານການສົ່ງເສີມການສ້າງ ຫຼື ຜະລິດສື່ ວີດີໂອ ເຊັ່ນການໃຫ້ລາງວັນ ຫຼື ການຍ້ອງຍໍປະເພດຕ່າງໆ; ປັດໄຈດ້ານການສ້າງສິ່ງອຳນວຍຄວາມສະດວກເຊັ່ນການຈັດຫາເຄື່ອງອັດຄຼິບທີ່ທັນສະ ໄໝ ເປັນຕົ້ນກ້ອງຖ່າຍວີດີໂອທີ່ມີຄຸນນະພາບດີ ມີຫ້ອງ Studio ອັດຄຼິບສະເພາະໃຫ້ພະນັກງານໄດ້ໃຊ້ບໍລິການ; ປັດໃຈດ້ານການບໍລິການລະບົບອິນເຕີເນັດທີ່ວ່ອງໄວ ແລະ ມີຄຸນະພາບດີ ແລະ ປັດໄຈອື່ນໆອີກທີ່ບໍ່ໄດ້ນຳເຂົ້າມາ ສຶກສາໃນຄັ້ງນີ້.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິ ຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກ ສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄຳຂອບໃຈ

ໃນການຄົ້ນຄວ້າຄັ້ງນີ້ ທາງທີມງານຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງມາຍັງ ມະຫາວິທະຍາໄລ ສຸພານຸວົງທີ່ໃຫ້ການສະໜັບສະໜູນທຶນການຄົ້ນຄວ້າວິທະຍາ ສາດ ປະຈຳປີ 2023 ຈຶ່ງສາມາດເຮັດໃຫ້ບົດຄົ້ນຄວ້າຄັ້ງນີ້ສຳເລັດຢ່າງຈົບງາມ.

## 8. ເອກະສານອ້າງອີງ

ຫ້ອງການຈັດຕັ້ງພະນັກງານ ມສ. (2024). *ສະຖິຕິພະນັກງານພາຍໃນມະຫາວິທະຍາໄລ ສຸພານຸວົງ.* ມະຫາວິທະຍາໄລ ສຸພານຸວົງ

Bouasangthong, V., Soukhavong, S., Hongnou, O., Changnakham, P., & Toumma, S. (2021). Challenges on teacher effectiveness in teacher education institution in Lao PDR, 104-116, in *2nd National Conference on Educational Research (NCER II)*, Luang Prabang, Laos: Faculty of Education, Souphanouvong University.

Banday, M.T., Ahmed, M., & Jan, T., R. (2013). Applications of e-learning in engineering education: a case study, *Procedia - Social and Behavioral Sciences,123,* 406-413.

Faber, B. (2020). *Digital video editing with Adobe Premiere Pro: A beginner's guide*. Routledge.

Fisher, J. (2021). *Video production for educators: Techniques and best practices*. Routledge.

Harris, J., & Rea, A. (2019). *Professional development and collaborative learning: An evaluation of the impact of a multimedia workshop series on teaching practices. Journal of Educational Multimedia and Hypermedia, 28*(3), 245-265.

Guseva., Y., & Kauppinen., T. (2018). Learning in the Era of Online Videos: How to Improve Teachers' Competencies of Producing Educational Videos, *Editorial Universitat Polit`ecnica de Val`encia*, DOI: http://dx.doi.org/10.4995/HEAd18.2018.8096

Kaware, S.S., & Sain, S.K. (2015). ICT application in education: an overview, *International Journal of Multidisciplinary Approach and Studies, 2*(1), 25-32.

König, J., Biela, D.J.J., & Glutsch, N. (2020). Adapting to online teaching during COVID-19 school closure: teacher education and teacher competence effects among early career teachers in Germany, *European Journal of Teacher Education, 43*(4), 608-622.

Lao National Assembly. (2016). Law of information technology. Vientiane: Assembly.

North, A. (2019). The beginner's guide to video editing. Journal of Visual Communication in Medicine*, 42*(1), 40-45.

https://doi.org/10.1080/17453054.2019.1566541

Peters, M. A., & Roberts, P. (2020). The role of collaborative professional development in promoting teachers' use of technology in the classroom. *Computers & Education, 148*, 103794. https://doi.org/10.1016/j.compedu.2019.103794

Reddick, C. G., & Turner, K. (2012). Internet speed and its effect on online educational learning environments. Journal of Online Learning and Teaching, *8*(3), 218-230.

Ratheeswari, K. (2018). Information Communication Technology in Education, *Journal of Applied and Advanced Research, 3(1)*

Shah, M.A.U.H., Khalid, M., Raheem, M.A., & Zahid, M. (2021). Teachers readiness to use of ICT in classrooms and academic performance, *Llkogretim online - elementary education online, 2(20).*

Sisombath, S., Phaiyavong, S., Thipphaphone, K., Phathoumvan, P., & Nordala, P. (2022). A study of Problems of lecturers in using ICT applications in online teaching at Souphanouvong University during the Covid 19 pandemic, *Souphanouvong University Journal of Multidisciplinary Research and Development, 8*(2)*, 31-38.*

UNESCO. (2021). KEDI Asia-Pacific regional policy seminar: supporting teachers' digital and remote teaching capacity in times of COVID-19 and beyond. Online webinar held 21-22 October 2021.

UGWU., Ndidiamaka, P., Nnaekwe., & Kingsley. (2019) *The Concept and Application of Ict to Teaching/Learning Process.* International Research Journal of Mathematics, Engineering and IT, 6 (2). ISSN 2348-9766

Vathanavong, T., Vang, K., Chanthahong, K., Lamphaiphanh, K., & Pathoumvanh, P. (2023). Application of E-learning in teaching and learning statistics for research, *Souphanouvong University Journal of Multidisciplinary Research and Development 10*(1).

Zarei, S., & Mohammadi, S. (2021). Challenges of higher education related to e-learning in developing countries during Covid-19 spread: a review of the perspectives of students, instructors, policymakers, and ICT experts, *Nature Public Health Emergency Collection,* doi: 10.1007/s11356-021-14647-2

**ຕາຕະລາງ** 2: ດ້ານຄຸນນະພາບຂອງຄຼິບທີ່ອັດຈາກໜ້າຈໍຄອມພິວເຕີ້ ໂດຍໂປແກມ Ocam

| ລ/ດ | ຄຸນນະພາບຂອງຄຼິບ | N | ສ່ວນຮ້ອຍ(%) |
|---|---|---|---|
| 1 | ຄຼິບມີຄຸນນະພາບດີເຊັ່ນ ພາບກ້ອງຖ່າຍຜູ້ບັນຍາຍແຈ້ງເຫັນໜ້າຊັດເຈນ ສຽງຈາກຜູ້ບັນຍາຍແຈ້ງຟັງໄດ້ຫຍິນສຽງອະທິບາຍຈາກຜູ້ບັນຍາຍຊັດເຈນ ສາມາດເຫັນເນື້ອໃນບົດຮຽນທີ່ສອນໂຕໜັງສືແຈ້ງດີ ຄຼິບບໍ່ຄ້າງກະຕຸກກະຕັກ | 10 | 55.55 |
| 2 | ພາບກ້ອງຖ່າຍຜູ້ບັນຍາຍມືວບໍ່ເຫັນໜ້າຊັດເຈນ ສຽງຈາກຜູ້ບັນຍາຍຄ້າງເປັນຕອນມີສຽງກຸກງກັກງ ຟັງບໍ່ໄດ້ຫຍິນສຽງອະທິບາຍຈາກຜູ້ບັນຍາຍຊັດເຈນ ເນື້ອໃນບົດຮຽນທີ່ສອນລາຍໂຕໜັງສືບໍ່ແຈ້ງດີ ຄຼິບຄ້າງກະຕຸກກະຕັກບັນຫາເກີດຈາກລະບົບ ແລະ ສະເປັກຄອມພິມເຕີ້ລຸ້ນເກົ່າຫຼາຍ | 4 | 22.22 |
| 3 | ພາບກ້ອງຖ່າຍຜູ້ບັນຍາຍແຈ້ງເຫັນໜ້າຊັດເຈນ ແຕ່ບໍ່ໄດ້ຫຍິນສຽງຈາກຜູ້ບັນຍາຍ ບັນຫາເກີດຈາກ ລະບົບສຽງຄອມພິວເຕີ້ ຫຼື ໄດເວີ້ຊອບແວ່ສຽງມີບັນຫາ ສາມາດເຫັນເນື້ອໃນບົດຮຽນທີ່ສອນໂຕໜັງສືແຈ້ງດີ ຄຼິບບໍ່ຄ້າງກະຕຸກກະຕັກ | 2 | 11.11 |
| 4 | ຄຼິບທີ່ອັດອອກມາບໍ່ສຳເລັດຄອມຄ້າງຄຼິບບໍ່ສາມາດນຳມາໃຊ້ໄດ້ ບັນຫາເກີດຈາກຄອມພິວເຕີ້ສະເປັກຕ່ຳ ແລະ ລຸ້ນເກົ່າແກ່ຫຼາຍ | 2 | 11.11 |

ຕາຕະລາງ 3: ດ້ານຜົນງານຄຸນນະພາບຂອງຄຼິບວິດີໂອທີ່ຜ່ານການຕັດຕໍ່ ດ້ວຍໂປແກມ Capcut ແລະ Canva

| ລ/ດ | ຄຸນນະພາບຂອງຄຼິບ | N | ສ່ວນຮ້ອຍ(%) |
|---|---|---|---|
| 1 | ພາບແຈ້ງ ສຽງແຈ້ງຊັດເຈນ ມີການໃສ່ເອັບເຟັກປະກອບພາບເຄື່ອນໄຫວ ມີການໃສ່ຄຼິບສຽງເສບດົນຕີປະກອບ ມີການໃສ່ Transition ລະຫວ່າງ ຄຼິບທີ່ເອົາມາຕໍ່ໃສ່ກັນ ມີການໃສ່ຕົວໜັງສື ປະກອບສຽງບັນຍາຍແຕ່ລະຕອນ ພາບ ແລະ ສຽງບໍ່ມີຄ້າງກະຕຸກກະຕັກ | 8 | 44.44 |

| | | | |
|---|---|---|---|
| 2 | ພາບແຈ້ງ ສຽງແຈ້ງຊັດເຈນ ມີການໃສ່ເອັບເຟັກປະກອບພາບເຄື່ອນໄຫວ ມີການໃສ່ຄຼິບສຽງເສບດົນຕີປະກອບ ມີການໃສ່ Transition ລະຫວ່າງຄຼິບທີ່ເອົາມາຕໍ່ໃສ່ກັນ ມີການໃສ່ຕົວໜັງສື ປະກອບສຽງບັນຍາຍແຕ່ລະຕອນ ພາບ ແລະ ສຽງຄ້າງກະຕຸກກະຕັກບາງຕອນລະຫວ່າງຄຼິບ | 5 | 27.77 |
| 3 | ພາບແຈ້ງ ສຽງແຈ້ງຊັດເຈນ ມີການໃສ່ Transition ລະຫວ່າງຄຼິບບາງຕອນທີ່ເອົາມາຕໍ່ໃສ່ກັນ ພາບ ແລະ ສຽງ ບໍ່ມີຄ້າງກະຕຸກກະຕັກແຕ່ຕົ້ນຈົນຈົບຄຼິບ | 3 | 16.66 |
| 4 | ການຕັດຕໍ່ມີບັນຫາ ຄອມຊ້າ ເຊື່ມອິນເຕີເນັດຍາກ ຕັດຕໍ່ແລ້ວ ເຊັບຟາຍວີດີໂອອອກໄປໃຊ້ບໍ່ໄດ້ | 2 | 11.11 |

ຕາຕະລາງ 4: ບັນຫາການຜະລິດສື່ວີດີໂອການສອນ ແລະ ການສ້າງເວັບໄຊ

| ລ/ດ | ບັນຫາການຜະລິດສື່ວີດີໂອການສອນ ແລະ ການສ້າງເວັບໄຊ | N | ສ່ວນຮ້ອຍ(%) |
|---|---|---|---|
| 1 | ແມ່ນຄອມພິວເຕີ ສະເປັກຕໍ່າ ແລະ ຊ້າ | 8 | 66.66 |
| 2 | ບໍ່ມີຄວາມຮູ້ພື້ນຖານດ້ານຄອມພິວເຕີ | 5 | 55.55 |
| 3 | ໂທລະສັບສະເປັກຕໍ່າບໍ່ສາມາດຕັດຕໍ່ຄຼິບໄດ້ | 3 | 44.44 |
| | ອິນເຕີເນັດຊ້າຫຼາຍ | | 38.88 |

ຕາຕະລາງ 5 : ປັດໃຈທີ່ຈະສາມາດກະຕຸ້ນໃຫ້ອາຈານຜະລິດສື່ວີດີໂອການສອນຂອງຕົນເອງໃຫ້ຫຼາຍຂຶ້ນ

**Model Summary[b]**

| Model | R | R Square | Adjusted R Square | Std. Error of the Estimate | Change Statistics | | | | | Durbin-Watson |
|---|---|---|---|---|---|---|---|---|---|---|
| | | | | | R Square Change | F Change | df1 | df2 | Sig. F Change | |
| 1 | .837[a] | .700 | .636 | .25820 | .700 | 10.889 | 3 | 14 | .001 | 1.871 |

a. Predictors: (Constant), 6 Fast and good quality internet system service factors., 3 Factors in terms of issuing requirements for professors of each subject must have their own teaching videos posted on the web or in the database of the relevant office, 2 Factors related to video production costs

b. Dependent Variable: The motivation of teachers to produce more of their own teaching video media

ຕາຕະລາງ 6: ປັດໃຈທີ່ມີອິດທິພົນຕໍ່ກະຕຸ້ນໃຫ້ອາຈານຜະລິດສື່ວີດີໂອການສອນຂອງຕົນເອງຫຼາຍກົ່ວໝູ່

**Coefficients[a]**

| Model | Unstandardized Coefficients | | Standardized Coefficients | t | Sig. | Collinearity Statistics | |
|---|---|---|---|---|---|---|---|
| | B | Std. Error | Beta | | | Tolerance | VIF |
| 1 (Constant) | 5.933 | .819 | | 7.243 | .000 | | |
| ປັດໃຈດ້ານ ຄ່າແຮງງານການຜະລິສື່ວີດີໂອ | -233 | .365 | .279 | .000 | .003 | .250 | 4.000 |
| ປັດໃຈດ້ານການອອກຂໍ້ກໍານົດໃຫ້ອາຈານແຕ່ລະວິຊາ ຕ້ອງມີວີດີໂອການສອນຂອງຕົນເອງ ລົງໃນເວັບ ຫຼື ຖານຂໍ້ມູນຂອງຫ້ອງການທີ່ກ່ຽວຂ້ອງ | .311 | .286 | .303 | 1.087 | .001 | .276 | 3.621 |
| ປັດໃຈດ້ານການບໍລິການລະບົບອິນເຕີເນັດທີ່ວ່ອງໄວ ແລະ ມີຄຸນະພາບດີ | -.622 | .130 | -.798 | -4.802 | .000 | .777 | 1.287 |